ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
****

ເລກທີ: 611/ພກພ
ນະຄອນຫຼວງວຽງຈັນ, ວັນທີ: 06 APR 2018

ໜັງສືແຈ້ງເຊີນ

ຮຽນ: ທ່ານຜູ້ຖືຮຸ້ນ ຂອງບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ.

ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017.

- ອີງຕາມມະຕິກອງປະຊຸມສະພາບໍລິຫານ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ຄັ້ງທີ 1/2018 ລົງວັນທີ 07/02/2018;
- ອີງຕາມມະຕິກອງປະຊຸມສະພາບໍລິຫານ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ຄັ້ງທີ 2/2018 ລົງວັນທີ 12/03/2018.

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (ພກພ) ຂໍຖືເປັນກຽດຮຽນເຊີນທ່ານຜູ້ຖືຮຸ້ນຂອງບໍລິສັດເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017 ທີ່ຈະໄດ້ຈັດຂຶ້ນໃນວັນທີ **25 ເມສາ 2018** ເວລາ **14:30** ໂມງ (ເລີ່ມລົງທະບຽນ ເວລາ **13:00** ໂມງ) ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 8, ອາຄານຕະຫຼາດຫຼັກຊັບລາວ, ຖະໜົນ T4, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ເພື່ອພິຈາລະນາ ແລະ ຮັບຮອງເອົາບັນຫາຕ່າງໆ ຕາມວາລະກອງປະຊຸມທີ່ຄັດຕິດມາພ້ອມນີ້.

ບໍລິສັດໄດ້ກຳນົດເອົາວັນທີ 26 ມີນາ 2018 ເປັນມື້ປິດປຶ້ມບັນຊີຜູ້ຖືຮຸ້ນ (Record Date) ເພື່ອກຳນົດສິດໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017.

ກໍລະນີທີ່ທ່ານຜູ້ຖືຮຸ້ນບໍ່ສາມາດເຂົ້າຮ່ວມ ສາມາດມອບສິດໃຫ້ບຸກຄົນອື່ນເຂົ້າຮ່ວມປະຊຸມ ແລະ ອອກຄະແນນສຽງແທນ, ກະລຸນາຕື່ມຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສິດ ຕາມເອກະສານຄັດຕິດເຂົ້າຮ່ວມປະຊຸມ ແລະ ຕ້ອງສົ່ງມອບໃບມອບສິດໃຫ້ເລຂາກອງປະຊຸມກ່ອນເລີ່ມປະຊຸມ.

ຫວັງຢ່າງຍິ່ງວ່າ ທ່ານຄົງຈະສະລະເວລາອັນມີຄ່າຂອງທ່ານເຂົ້າຮ່ວມປະຊຸມກັບພວກເຮົາໃນຄັ້ງນີ້ດ້ວຍ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

ປະທານສະພາບໍລິຫານ
ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ Phousy Construction and Development Public Company

ສີທອງ ພົມມະຈິດ

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ຊັ້ນ 6, , ໂຮງແຮມວຽງຈັນ ພລາຊາ, ບ້ານ ສີສະເກດ ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ.
Tel/Fax: (856-21) 265 394, Email: info@phousy.com; Website: www.phousy.com

ບໍລິສັດ ພຸສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ເອກະສານກອງປະຊຸມສາມັນ ຜູ້ຖືຮຸ້ນ ປະຈຳປີ 2017

ວັນພຸດ ວັນທີ 25 ເມສາ 2018
ລົງທະບຽນເວລາ 13:00 ໂມງ
ສະຖານທີ່: ຫ້ອງປະຊຸມໃຫຍ່ ຊັ້ນ 8, ອາຄານຕະຫຼາດຫຼັກຊັບລາວ,
ຖະໜົນ T4, ບ້ານ ໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ,
ສປປ ລາວ. ໂທລະສັບ: +856 (21) 265 394, ແຟັກ: +856 (21) 265394.

ເອກະສານຄັດຕິດ

1. ວາລະກອງປະຊຸມສາມັນ ຜູ້ຖືຮຸ້ນ ປະຈຳປີ 2017 (ເອກະສານຄັດຕິດ 1)
2. ເອກະສານລາຍງານການເງິນ ປະຈຳປີ 2017 (ເອກະສານຄັດຕິດ 2);
3. ປະຫວັດຫຍໍ້ຂອງຜູ້ອຳນວຍການໃຫຍ່ຄົນໃໝ່ (ເອກະສານຄັດຕິດ 3);
4. ປະຫວັດຫຍໍ້ຂອງສະມາຊິກສະພາບໍລິຫານຄົນໃໝ່ (ເອກະສານຄັດຕິດ 4);
5. ປະຫວັດຫຍໍ້ຂອງສະມາຊິກອິດສະລະ (ເອກະສານຄັດຕິດ 5);
6. ແບບຟອມໃບມອບສິດ (ເອກະສານຄັດຕິດ 6);
7. ເອກະສານ ແລະ ຫຼັກຖານທີ່ຕ້ອງໃຊ້ໃນການສະເໜີໂຕເຂົ້າຮ່ວມກອງປະຊຸມ, ການລົງທະບຽນ ແລະ ການລົງຄະແນນສຽງໃນກອງປະຊຸມຜູ້ຖືຮຸ້ນ (ເອກະສານຄັດຕິດ 7);
8. ແຜນທີ່ສະຖານທີ່ຈັດປະຊຸມ (ເອກະສານຄັດຕິດ 8).

ໝາຍເຫດ

1. ຜູ້ຖືຮຸ້ນທຸກທ່ານ ຕ້ອງໄປຮັບເອົາໜັງສືເຊີນປະຊຸມພ້ອມເອກະສານຄັດຕິດຕ່າງໆ ເລີ່ມຕັ້ງແຕ່ 06 ເມສາ 2018, ຢູ່ອາຄານຕະຫຼາດຫຼັກຊັບລາວ ຊັ້ນ 4 ພະແນກຊຳລະສະສາງ ແລະ ຮັບຝາກຫຼັກຊັບ, ບ້ານໂພນທັນ, ຖະໜົນ ໄຊເສດຖາ, ນະຄອນຫຼວງວຽງຈັນ, ເລກໂທລະສັບ: (856-21) 454361-4, ແຟັກ: (856-21) 454 361-4 ຫຼື ຕິດຕໍ່ໂດຍກົງ **ທ່ານ ອາລຸນໄຊ ນະໄພວົງ** , ໂທລະສັບ: (856-20) 5562 5651.
2. ສຳລັບຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມປະຊຸມດ້ວຍຕົນເອງກະລຸນານຳບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນຄົນຕ່າງປະເທດ) ມາໃນວັນປະຊຸມ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມ.
3. ສຳລັບຜູ້ຖືຮຸ້ນທີ່ຈະໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງ ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນໃບໃບມອບສິດ ຕາມ **<u>ເອກະສານຄັດຕິດ 6</u>** ທີ່ຄັດຕິດມາພ້ອມນີ້ໃຫ້ຖືກຕ້ອງຄົບຖ້ວນ.
4. ສຳລັບຜູ້ຕາງໜ້າທີ່ຈະເຂົ້າຮ່ວມປະຊຸມຈະຕ້ອງນຳເອກະສານ ຫຼື ຫຼັກຖານ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມຕາມລາຍລະອຽດທີ່ໄດ້ລະບຸໄວ້ໃນ **<u>ເອກະສານຄັດຕິດ 7</u>** ທີ່ໄດ້ຄັດຕິດມາພ້ອມ ແລະ ສົ່ງມອບໃຫ້ປະທານກອງປະຊຸມ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍຈາກປະທານ, ຜູ້ຕາງໜ້າຈຶ່ງເຂົ້າຮ່ວມກອງປະຊຸມໄດ້.
5. ໃນກໍລະນີທີ່ຜູ້ຖືຮຸ້ນຈະມອບໝາຍໃຫ້ຜູ້ອຳນວຍການຂອງບໍລິສັດ ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສິດ ແລະ ໝາຍ (✓) ໃສ່ ❑ ເພື່ອເລືອກເອົາຜູ້ອຳນວຍການຂອງບໍລິສັດ ທ່ານໃດທ່ານໜຶ່ງເປັນຜູ້ຕາງໜ້າ ແລະ ສົ່ງໃບມອບສິດດັ່ງກ່າວພ້ອມເອກະສານປະກອບ ສົ່ງເຖິງ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ເລຂາກອງປະຊຸມຂອງບໍລິສັດ ແມ່ນທ່ານ ຄອນສະຫວັນ ທຳວົງສິດ, ທີ່ໂຮງແຮມ ວຽງຈັນ ພລາຊາ, ຊັ້ນ 6, ຖະໜົນ ສາຍລົມ, ບ້ານ ຫັດສະດີ, ເມືອງ ຈັນທະບຸລີ, ນະຄອນຫຼວງວຽງຈັນ, ສປປ ລາວ ແລະ ກະລຸນາສົ່ງເຖິງບໍລິສັດກ່ອນວັນທີ 25 ເມສາ 2018.
6. ຖ້າຫາກທ່ານໃດມີຂໍ້ສົງໄສ ແລະ ຄຳຖາມກ່ຽວກັບໃບມອບສິດ ລວມທັງລາຍລະອຽດໃນໜັງສືເຊີນປະຊຸມສະບັບນີ້ ທ່ານສາມາດສອບຖາມ ທ່ານ ຄອນສະຫວັນ ທຳວົງສິດ ເບີໂທ (+856-21) 265 394 ຫຼື (020 2221 3854) ໃນໂມງລັດຖະການ.

ວາລະກອງປະຊຸມ ສາມັນຜູ້ຖືຮຸ້ນ ປະຈຳປີ 2017 ຂອງ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ວາລະທີ 01. ພິຈາລະນາ ແລະ ຮັບຮອງເອົາລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2017 ແລະ ເອກະສານລາຍງານການເງິນຂອງບໍລິສັດ ປະຈຳປີ 2017

ຂໍ້ມູນປະກອບ: ທຸລະກິດຫຼັກຂອງບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ຄືການກໍ່ສ້າງ, ສ້ອມແປງ, ບຳລຸງຮັກສາຖະໜົນ, ຂົວ ແລະ ອື່ນໆ. ມີລູກຄ້າພຽງລາຍດຽວ ຄື ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໂຄງການທີ່ບໍລິສັດປະມູນໄດ້ ແລະ ພວມດຳເນີນງານຢູ່ໃນປີ 2017 ມີ **05** ໂຄງການ, ມີມູນຄ່າທັງໝົດຕາມສັນຍາ 440.478 ລ້ານກີບ ໃນນັ້ນມີໂຄງການໃໝ່ທີ່ປະມູນໄດ້ໃນປີ 2017 ຈຳນວນ 03 ໂຄງການ. ມີມູນຄ່າຕາມສັນຍາ 15.982 ລ້ານກີບ.

ການມອບພັນທະອາກອນໃຫ້ລັດປະຈຳປີ 2017

ລ/ດ	ລາຍການ	ຫົວໜ່ວຍ	ລວມມູນຄ່າ (ກີບ)
1	ອາກອນມູນຄ່າເພີ່ມ		546.565.000
2	ອາກອນເງິນເດືອນ		29.455.000
3	ອາກອນກຳໄລ		149.596.000
	ລວມ		**725.616.000**

ຜົນການດຳເນີນທຸລະກິດປະຈຳປີ 2017 ໄດ້ຮັບການກວດສອບຈາກບໍລິສັດ ພຣາຍສ໌ວໍເຕີ້ເຮົ້າສ໌ກຸ ເປີ້ສ໌ (ລາວ) ຈຳກັດ ແລະ ຮັບຮອງຈາກສະພາບໍລິຫານຂອງ ພກພ ເຊິ່ງມີ:

ລາຍການ	ປີ 2017	ປີ 2016
ຊັບສິນທັງໝົດ (ລ້ານກີບ)	946.844	1.014.077
ໜີ້ສິນທັງໝົດ (ລ້ານກີບ)	142.090	110.588
ສ່ວນຂອງຜູ້ຖືຮຸ້ນ (ລ້ານກີບ)	804.754	903.489
ລາຍຮັບທັງໝົດ (ລ້ານກີບ)	45.384	99.507
ກຳໄລສຸດທິ (ລ້ານກີບ)	6.725	58.988
ກຳໄລສຸດທິຕໍ່ຮຸ້ນ (ກີບ/ຮຸ້ນ)	16,56	1.233,70

ຄຳເຫັນຂອງສະພາບໍລິຫານ: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມ ສາມັນຜູ້ຖືຮຸ້ນ ພິຈາລະນາຮັບຮອງເອົາລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2017 ແລະ ເອກະສານ ລາຍງານການເງິນຂອງບໍລິສັດ ປະຈຳປີ 2017 ທີ່ຜ່ານການກວດສອບຈາກຜູ້ກວດສອບບັນຊີທີ່ໄດ້ຮັບອະນຸຍາດ.

ການລົງມະຕິ: ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 02. ພິຈາລະນາ ແລະ ຮັບຮອງ ແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2018.

ຂໍ້ມູນປະກອບ: ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ມີເປົ້າໝາຍສູ້ຊົນໃນການກໍ່ສ້າງຂົວທາງປະຕິບັດບໍລິມາດໃຫ້ບັນລຸເປົ້າໝາຍ. ໂຄງການບ້ານອູໃຫ້ໄດ້ 41.72% ມູນຄ່າ 143,367 ລ້ານກີບ, ໂຄງການທາງກົ່ວເຈຍໃຫ້ໄດ້ 55,37% ມູນຄ່າ 80,881 ລ້ານກີບ ແລະ ໂຄງການທາງອັດຕະປື ມີມູນຄ່າ 40,182 ລ້ານກີບ.

- **ແຜນລາຍຮັບໂຄງການກໍ່ສ້າງຂົວ-ທາງ**

ຊື່ໂຄງການ	ປະຕິບັດໄດ້ຮອດປີ 2017		ແຜນສູ້ຊົນປະຕິບັດ 2018		ລວມປະຕິບັດໄດ້ທັ້ງໝົດ	
	ລ້ານກີບ	%	ລ້ານກີບ	%	ລ້ານກີບ	%
ໂຄງການທາງບ້ານອູ	156,472	45.54	143,367	41.72	299,839	87.26
ໂຄງການທາງກົ່ວເຈຍ	36,096	44.63	44,785	55.37	80,881	100.00
ໂຄງການທາງອັດຕະປື			40,182		40,182	-
ລວມທັ້ງໝົດ	**192,568**		**228,334**		**420,902**	

- **ແຜນພັດທະນາໂຄງສ້າງການໃໝ່ປະຈຳປີ 2018**

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ມີເປົ້າໝາຍໃນການພັດທະນາໂຄງການໃໝ່ປະຈຳປີ 2018 ດັ່ງນີ້:

1.1 ໂຄງການກໍ່ສ້າງທາງດ່ວນ ວຽງຈັນ-ປາກເຊ ຊ່ວງທີ 03 ສະຫວັນນະເຂດ - ສາລະວັນ 128 ກມ. ໂຄງການນີ້ຢູ່ໃນຊ່ວງກຳລັງສຳຫຼວດ ແລະ ສຶກສາຄວາມເປັນໄປໄດ້.
1.2 ໂຄງການກໍ່ສ້າງທາງປູຢາງສອງຊັ້ນຢູ່ແຂວງບໍ່ແກ້ວລວງຍາວ 57.76 ກມ ມູນຄ່າ 226 ຕື້ກີບ.
1.3 ໂຄງການກໍ່ສ້າງທາງຊາຍແດນລາວ-ກຳປູເຈຍລວງຍາວ 154 ກມ ມູນຄ່າ 330 ຕື້ກີບ.
1.4 ໂຄງການກໍ່ສ້າງທາງປູຢາງສອງຊັ້ນແຕ່ຂົວນ້ຳດິງຫາຕາດກວາງຊີ ແຂວງຫລວງພະບາງລວງຍາວ 25 ກມ ມູນຄ່າ 154 ຕື້ກີບ.
1.5 ໂຄງການກໍ່ສ້າງທາງ 4 ເລນປູເບຕົ້ງໃນຕົວເມືອງຫ້ວຍຊາຍ ແຂວງບໍ່ແກ້ວ ລວງຍາວ 6.17 ກມ ມູນຄ່າ 126 ຕື້.

ຄຳເຫັນຂອງສະພາບໍລິຫານ: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມພິຈາລະນາຮັບຮອງເອົາແຜນດຳເນີນທຸລະກິດຂອງບໍລິສັດປະຈຳປີ 2018.

<u>ການລົງມະຕິ</u>: ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 03. ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດຂອງບໍລິສັດ 6 ເດືອນທ້າຍປີ 2017

<u>ຂໍ້ມູນປະກອບ</u>: ບໍລິສັດມີນະໂຍບາຍຈ່າຍເງິນປັນຜົນໃຫ້ແກ່ບັນດາຜູ້ຖືຮຸ້ນໃນແຕ່ລະປີຕາມຜົນການດຳເນີນງານໃນອັດຕາສ່ວນບໍ່ຫຼຸດ 50 ສ່ວນຮ້ອຍຂອງກຳໄລສຸດທິຂອງບໍລິສັດ ພາຍຫຼັງຫັກເຂົ້າຄັງສຳຮອງຕາມລະບຽບການ ແລະ ຄັງສຳຮອງອື່ນໆທີ່ບໍລິສັດກຳນົດໄວ້. ໂດຍມີເງື່ອນໄຂວ່າການຈ່າຍເງິນປັນຜົນຂຶ້ນຢູ່ກັບສະພາບເສດຖະກິດ, ກະແສເງິນສົດ, ແຜນການລົງທຶນ, ຄວາມຈຳເປັນ ແລະ ຄວາມເໝາະສົມອື່ນໆໃນອະນາຄົດ. ບໍລິສັດມີນະໂຍບາຍຈະຈ່າຍເງິນປັນຜົນໂດຍກຳນົດໃຫ້ຜູ້ຖືຮຸ້ນເດີມ (ຜູ້ຖືຮຸ້ນສ້າງຕັ້ງ 9 ທ່ານ) ໄດ້ຮັບອັດຕາຈ່າຍເງິນປັນຜົນ 50 ສ່ວນຮ້ອຍຂອງອັດຕາຈ່າຍເງິນປັນຜົນຕໍ່ຮຸ້ນທີ່ກຳນົດຈ່າຍໃຫ້ຜູ້ຖືຮຸ້ນທົ່ວໄປ. ໂດຍເງື່ອນໄຂດັ່ງກ່າວມີຜົນເປັນໄລຍະເວລາຂອງການຈ່າຍເງິນປັນຜົນ 2 ປີພາຍຫຼັງໄດ້ຈົດທະບຽນໃນຕະຫຼາດຫຼັກຊັບລາວ. ບໍລິສັດມີນະໂຍບາຍຈ່າຍເງິນປັນຜົນ 2 ຄັ້ງຕໍ່ປີ, ໃນປີ 2017 ເອກະສານລາຍງານການເງິນລວມກິດຈະການມີກຳໄລສຸດທິ 6.725 ລ້ານກີບ ແບ່ງກຳໄລສຸດທິເຂົ້າຄັງສຳຮອງຕາມກົດໝາຍເປັນຈຳນວນ 673 ລ້ານກີບ ຫຼື 10%.

<u>ຄຳເຫັນຂອງສະພາບໍລິຫານ</u>: ຜົນການດຳເນີນທຸລະກິດ ປີ 2017 ບໍລິສັດ ມີກຳໄລສຸດຈາກ ທັງໝົດ 6.725 ລ້ານກີບ. ສະພາບໍລິຫານເຫັນດີໃຫ້ກອງປະຊຸມ ອະນຸມັດການຈ່າຍເງິນປັນຜົນ 6 ເດືອນທ້າຍປີ 2017 ພາຍຫຼັງຫັກເຂົ້າຄັງສຳຮອງຕາມລະບຽບການ ຈຳນວນ 673 ລ້ານກີບ, ເທົ່າກັບ 7,45 ກີບ/ຮຸ້ນ, ລວມເປັນເງິນປັນຜົນທີ່ຈະຈ່າຍທັງໝົດ 2.474 ລ້ານກີບ, ກຳນົດຈ່າຍເງິນປັນຜົນໃນວັນທີ 25 ພຶດສະພາ 2018 ແລະ ກຳນົດມື້ປິດປຶ້ມບັນຊີເພື່ອກຳນົດສິດຜູ້ຖືຮຸ້ນໃນການຮັບເງິນປັນຜົນ ໃນວັນທີ 26 ມິນາ 2018.

<u>ການລົງມະຕິ</u>: ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກ່ວາເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 04. ພິຈາລະນາ ແລະ ອະນຸມັດ ການມອບອຳນາດໃຫ້ແກ່ສະພາບໍລິຫານ ພິຈາລະນາ ແລະ ອະນຸມັດ ຈ່າຍເງິນປັນຜົນລະຫວ່າງປີ ຂອງປີຕໍ່ໆໄປ.

<u>ຂໍ້ມູນປະກອບ</u>: ອີງຕາມນະໂຍບາຍຂອງບໍລິສັດໃນການຈ່າຍເງິນປັນຜົນ 2 ຄັ້ງຕໍ່ປີ ແລະ ອີງຕາມກົດໝາຍວິສາຫະກິດ ສະບັບປັບປຸງ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013 ມາດຕາ 155 ກຳນົດໄວ້ " ການຈ່າຍເງິນປັນຜົນຕ້ອງໄດ້ຮັບຄວາມເຫັນດີຈາກກອງປະຊຸມຜູ້ຖືຮຸ້ນກ່ອນ"

<u>ຄຳເຫັນຂອງສະພາບໍລິຫານ</u>: ສະພາບໍລິຫານເຫັນວ່າ ໃນຊ່ວງໄລຍະ 6 ເດືອນ ຕົ້ນປີຕໍ່ໜ້າ ບໍລິສັດອາດຈະບໍ່ມີວາລະທີ່ສຳຄັນທີ່ຕ້ອງຂໍອະນຸມັດຈາກກອງປະຊຸມຜູ້ຖືຮຸ້ນ ນອກຈາກວາລະອະນຸມັດຈ່າຍເງິນປັນຜົນລະຫວ່າງປີ. ສະພາບໍລິຫານຈຶ່ງເຫັນຄວນໃຫ້ກອງປະຊຸມຜູ້ຖືຮຸ້ນມອບອຳນາດໃຫ້ແກ່ສະພາບໍລິຫານໃນການປະກາດ ແລະ ອະນຸມັດການຈ່າຍເງິນປັນຜົນລະຫວ່າງປີ ຈາກຜົນການດຳເນີນທຸລະກິດໃນລະຫວ່າງປີ ແລ້ວຈຶ່ງແຈ້ງໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຮອງໃນກອງປະຊຸມຜູ້ຖືຮຸ້ນຄັ້ງຕໍ່ໄປ.

<u>ການລົງມະຕິ</u>: ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 05. ພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງ ແລະ ກຳນົດຄ່າຈ້າງ ຜູ້ກວດສອບບັນຊີພາຍນອກ ປີ 2018

<u>ຂໍ້ມູນປະກອບ</u>: ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ເລກທີ 46/ສພຊ ລົງວັນທີ 26 ທັນວາ 2013 ມາດຕາ 154 ສິດ ແລະ ໜ້າທີ່ຂອງກອງປະຊຸມສາມັນຜູ້ຖືຮຸ້ນ ກຳນົດໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນເປັນຜູ້ເລືອກຕັ້ງຜູ້ກວດສອບບັນຊີ ແລະ ຄ່າຈ້າງຂອງຜູ້ກວດສອບບັນຊີ ໂດຍການສະເໜີຂອງ ສະພາບໍລິຫານໄດ້ພິຈາລະນາເຫັນຄວນໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາອະນຸມັດແຕ່ງຕັ້ງ ບໍລິສັດ ພຣາຍສ໌ວໍເຕີ້ເຮົ້າສ໌ກຸເປີ້ສ໌ (ລາວ) ຈຳກັດ (Price Water House Coopers (Lao) Co., Ltd) ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດ ປະຈຳປີ (2018-2020) ໂດຍມີຄ່າຈ້າງເປັນເງິນຈຳນວນ 118.000 ໂດລາສະຫະລັດ ເນື່ອງຈາກບໍລິສັດ ພຣາຍສ໌ວໍເຕີ້ເຮົ້າສ໌ກຸເປີ້ສ໌ (ລາວ) ຈຳກັດ ເປັນຜູ້ກວດບັນຊີໃຫ້ແກ່ບໍລິສັດກ່ອນການອອກຈຳໜ່າຍຮຸ້ນຄັ້ງທຳອິດຂອງບໍລິສັດ ເຫັນວ່າການປະຕິບັດວຽກງານ ແລະ ການປະສານງານຢູ່ໃນລະດັບດີສົມຄວນ, ມີປະສົບການ, ຜູ້ກວດສອບ ແລະ ທີມງານມີຄວາມເຂົ້າໃຈແຈ້ງໃນໜ້າທີ່, ມີຄວາມລະອຽດຮອບຄອບໃນການທົບທວນ ແລະ ເປັນບໍລິສັດກວດສອບບັນຊີທີ່ໄດ້ມາດຕະຖານ ລວມທັງໄດ້ຮັບຄວາມໄວ້ວາງໃຈໃນລະດັບສາກົນ.

<u>ຄຳເຫັນຂອງສະພາບໍລິຫານ</u>: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາແຕ່ງຕັ້ງ ແລະ ກຳນົດຄ່າຈ້າງຂອງຜູ້ກວດສອບພາຍນອກດັ່ງກ່າວ.

<u>ການລົງມະຕິ</u>: ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 06. ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຜູ້ອຳນວຍການແທນຜູ້ອຳນວຍການທີ່ລາອອກ

<u>ຂໍ້ມູນປະກອບ</u>: ອີງຕາມກົດໝາຍວິສາຫະກິດ ສະບັບປັບປຸງ ເລກທີ 46/ສພຊ ລົງວັນທີ 26 ທັນວາ 2013 ມາດຕາ 123 ກຳນົດວ່າ " ຜູ້ອຳນວຍການຖືກເລືອກຕັ້ງຕາມກໍລະນີດັ່ງນີ້: (3) ຕຳແໜ່ງຜູ້ອຳນວຍການທີ່ວ່າງລົງໃນລະຫວ່າງສອງກອງປະຊຸມສາມັນຂອງຜູ້ຖືຮຸ້ນແມ່ນແຕ່ງຕັ້ງໂດຍສະພາບໍລິຫານ " ເຊິ່ງວັນທີ 28 ກຸມພາ 2018 ທ່ານ ນາງ ພິໄລພອນ ວົງປະເສີດ ໄດ້ລາອອກຈາກການເປັນຜູ້ອຳນວຍການຂອງບໍລິສັດ.

<u>ຄຳເຫັນຂອງສະພາບໍລິຫານ</u>: ໃນກອງປະຊຸມສະພາບໍລິຫານ ຄັ້ງທີ I/2018 ເຊິ່ງຈັດຂຶ້ນວັນທີ 7 ກຸມພາ 2018 ກອງປະຊຸມມີມະຕິແຕ່ງຕັ້ງ ທ່ານ ສີທາ ພົມມະຈິດ ເປັນຜູ້ອຳນວຍການຄົນໃໝ່ ໂດຍໃຫ້ຜູ້ອຳນວຍການທີ່ໄດ້ຮັບການແຕ່ງຕັ້ງມີອາຍຸການເທົ່າກັບອາຍຸການທີ່ຍັງເຫຼືອຂອງຜູ້ອຳນວຍການທີ່ລາອອກໄປແລ້ວ ຈຶ່ງເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນຮັບຮອງການແຕ່ງຕັ້ງຜູ້ອຳນວຍການ ລາຍລະອຽດປະຫວັດໂດຍຫຍໍ້ ຕາມ **ເອກະສານຄັດຕິດ 3.**

<u>ການລົງມະຕິ</u>: ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກ່ວາເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 07. ພິຈາລະນາ ແລະ ອະນຸມັດແຕ່ງຕັ້ງສະມາຊິກສະພາບໍລິຫານແທນສະມາຊິກສະພາບໍລິຫານທີ່ລາອອກ

ຂໍ້ມູນປະກອບ: ອີງຕາມຂໍ້ຕົກລົງວ່າດ້ວຍ ສະພາບໍລິຫານຂອງບໍລິສັດຈົດທະບຽນ ເລກທີ 0024/ ຄຄຊ ລົງວັນທີ 26 ຕຸລາ 2016 ມາດຕາ 9 ການແຕ່ງຕັ້ງສະມາຊິກສະພາບໍລິຫານ " ສະມາຊິກສະ ພາບໍລິຫານ ຖືກ ແຕ່ງຕັ້ງໂດຍກອງປະຊຸມຜູ້ຖືຮຸ້ນ" ອາຍຸການຂອງສະມາຊິກສະພາບໍລິຫານທີ່ຖືກແຕ່ງ ຕັ້ງໃໝ່ນັ້ນແມ່ນເທົ່າກັບອາຍຸ ການຂອງສະພາບໍລິຫານຂອງຊຸດເກົ່າທີ່ຍັງເຫຼືອ. ເຊິ່ງວັນທີ 28 ກຸມພາ 2018 ທ່ານ ນາງ ພິໄລພອນ ວົງປະເສີດ ໄດ້ ລາອອກຈາກການເປັນສະມາຊິກສະພາບໍລິຫານຂອງບໍລິສັດ.

ຄຳເຫັນຂອງສະພາບໍລິຫານ: ໃນກອງປະຊຸມສະພາບໍລິຫານ ຄັ້ງທີ I/2018 ເຊິ່ງຈັດຂຶ້ນວັນທີ 7 ກຸມພາ 2018 ກອງປະຊຸມມີມະຕິຮັບຮອງເອົາ ທ່ານ ພູຂົງ ອ້ອນລະມະນີ ເປັນສະມາຊິກສະພາບໍລິຫານ ໂດຍໃຫ້ ສະມາຊິກສະພາບໍລິຫານທີ່ໄດ້ຮັບການແຕ່ງຕັ້ງມີອາຍຸການເທົ່າກັບອາຍຸການທີ່ຍັງເຫຼືອຂອງສະມາຊິກສະພາບໍລິຫານທີ່ ລາອອກໄປແລ້ວ ຈຶ່ງເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາແຕ່ງຕັ້ງສະມາຊິກສະພາບໍລິຫານ ລາຍລະອຽດ ປະຫວັດໂດຍຫຍໍ້ຕາມ **ເອກະສານຄັດຕິດ 4.**

ການລົງມະຕິ: ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນ ສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 8. ພິຈາລະນາ ແລະ ອະນຸມັດແຕ່ງຕັ້ງຄະນະກຳມະການກວດສອບ ແລະ ຄະນະກຳມະການກຳນົດຄ່າ ຕອບແທນ

ຂໍ້ມູນປະກອບ: ອີງຕາມຂໍ້ຕົກລົງວ່າດ້ວຍ ສະພາບໍລິຫານຂອງບໍລິສັດຈົດທະບຽນ ເລກທີ 0024/ ຄຄຊ ລົງວັນທີ 26 ຕຸລາ 2016 ມາດຕາ 18 " ສະມາຊິກຂອງຄະນະກຳມະການກວດສອບ ຕ້ອງປະກອບດ້ວຍ ສະມາຊິກສະພາບໍລິຫານ ທີ່ບໍ່ດຳລົງຕຳແໜ່ງ ຜູ້ອຳນວຍການ" ເຊິ່ງ ທ່ານ ສີທາ ພົມມະຈິດ ໄດ້ດຳລົງຕຳແໜ່ງເປັນຜູ້ອຳ ນວຍການ ຈຶ່ງສະເໜີແຕ່ງຕັ້ງ ທ່ານ ພູຂົງ ລ້ອນລະມະນີ ເປັນສະມາຊິກຂອງຄະນະກຳມະການກວດສອບແທນ ແລະ ແຕ່ງຕັ້ງ ທ່ານ ທ່ານ ສີທາ ພົມມະຈິດ ເປັນຄະນະກຳມະການກຳນົດຄ່າຕອບແທນ ແທນ ທ່ານ ນາງ ພິໄລພອນ ວົງ ປະເສີດ ໄດ້ລາອອກ.

ຄຳເຫັນຂອງສະພາບໍລິຫານ: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມ ສາມັນຜູ້ຖືຮຸ້ນ ພິຈາລະນາແຕ່ງຕັ້ງ ທ່ານ ພູຂົງ ລ້ອນລະມະນີ ເປັນ ຄະນະກຳມະການກວດສອບ ແລະ ທ່ານ ສີທາ ພົມມະຈິດ ເປັນຄະນະກຳມະການກຳນົດຄ່າຕອບແທນ.

ການລົງມະຕິ: ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນ ສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ເອກະສານລາຍງານທາງການເງິນ

ບໍລິສັດ ພູຄີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ໃບລາຍງານສະຖານະການເງິນ
ໃນປີສິ້ນສຸດ ວັນທີ 31 ທັນວາ 2017

	ບົດ ອະທິບາຍ	2017 ລ້ານກີບ	2016 ລ້ານກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	4	540	803
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ	5	463,336	321,186
ເຄື່ອງໃຊ້ສ່ວນ		22	213
ຊັບສິນໝຸນວຽນອື່ນໆ	6	1,371	6,721
ລວມຊັບສິນໝຸນວຽນ		**465,269**	**328,923**
ຊັບສິນບໍ່ໝຸນວຽນ			
ອຸປະກອນ, ໂຮງຕຶກ ແລະ ອຸປະກອນ	7	479,757	683,425
ເງິນໃຫ້ກູ້ຢືມແກ່ພາກສ່ວນທີ່ກ່ຽວຂ້ອງ	8	1,818	1,729
ລວມຊັບສິນບໍ່ໝຸນວຽນ		**481,575**	**685,154**
ລວມຊັບສິນ		**946,844**	**1,014,077**
ໜີ້ສິນ ແລະ ທຶນຕົນເອງຂອງຜູ້ຖືຮຸ້ນ			
ໜີ້ສິນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ	9	43,009	18,354
ພາກສ່ວນຂອງເງິນກູ້ຢືມໄລຍະຍາວ - ສະຖາບັນການເງິນ	10	36,000	-
ພາກສ່ວນຂອງເງິນກູ້ຢືມໄລຍະຍາວ - ພາກສ່ວນທີ່ກ່ຽວຂ້ອງ	10	3,800	6,000
ໜີ້ຕ້ອງສົ່ງອາກອນ ກໍາໄລ	11	8,674	7,734
ໜີ້ສິນໝຸນວຽນອື່ນໆ	12	36,107	31,000
ລວມໜີ້ສິນໝຸນວຽນ		**127,590**	**63,088**
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຢືມໄລຍະຍາວ ຈາກສະຖາບັນການເງິນ	10	5,000	41,000
ເງິນກູ້ຢືມໄລຍະຍາວ ຈາກພາກສ່ວນທີ່ກ່ຽວຂ້ອງ	10	9,500	6,500
ລວມໜີ້ສິນບໍ່ໝຸນວຽນ		**14,500**	**47,500**
ລວມໜີ້ສິນ		**142,090**	**110,588**
ທຶນຕົນເອງຂອງຜູ້ຖືຮຸ້ນ			
ທຶນຈົດທະບຽນ		582,000	700,000
ສ່ວນເກີນມູນຄ່າຮຸ້ນ	13	12,540	-
ກໍາໄລສະສົມ			
ຈັດສັນ - ສໍາຮອງຕາມກົດໝາຍ	14	11,571	10,899
ບໍ່ໄດ້ຈັດສັນ		198,643	192,590
ລວມທຶນຕົນເອງຂອງຜູ້ຖືຮຸ້ນ		**804,754**	**903,489**
ລວມໜີ້ສິນ ແລະ ທຶນຕົນເອງຂອງຜູ້ຖືຮຸ້ນ		**946,844**	**1,014,077**

ທ່ານ ສີທາ ພົມມະຈັດ
ຜູ້ອໍານວຍການໃຫຍ່
ວັນທີ:

ທ່ານ ອະໄນໄລ ສີຫາລາດ
ຫົວໜ້າການເງິນ
ວັນທີ:

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນລວມ ແຕ່ໜ້າທີ 9 ຫາ 24 ແມ່ນຖືເປັນພາກສ່ວນໜຶ່ງ ຂອງເອກະສານລາຍງານການເງິນລວມສະບັບນີ້.

ໃບລາຍງານຜົນໄດ້ຮັບ
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2017

	ບົດ ອະທິບາຍ	2017 ລ້ານກີບ	2016 ລ້ານກີບ
ລາຍໄດ້ຈາກ ການກໍ່ສ້າງ		45,384	99,507
ຕົ້ນທຶນການຂາຍ	15	(16,238)	(23,651)
ກຳໄລລວມຂັ້ນຕົ້ນ		**29,146**	**75,856**
ລາຍຮັບອື່ນໆ		729	455
ລາຍຈ່າຍບໍລິຫານ	15	(10,104)	(6,836)
ກຳໄລ/(ຂາດທຶນ)ຈາກອັດຕາແລກປ່ຽນ ສຸດທິ		(2,067)	(97)
ຕົ້ນທຶນການເງິນ	16	(9,890)	(8,001)
ກຳໄລ ກ່ອນຈ່າຍອາກອນກຳໄລ		**7,814**	**61,377**
ອາກອນກຳໄລ	17	(1,089)	(2,388)
ກຳໄລສຸດທິສຳລັບປີ		**6,725**	**58,988**
ກຳໄລຕໍ່ຮຸ້ນ			
ພື້ນຖານກຳໄລຕໍ່ຮຸ້ນ	18	**16.56**	**1,233.70**

ທ່ານ ສີທາ ພິມມະຈິດ
ຜູ້ອຳນວຍການໃຫຍ່
ວັນທີ:

ທ່ານ ອະໄນໄລ ສີຫາລາດ
ຫົວໜ້າການເງິນ
ວັນທີ:

ບົດອະທິບາຍຮ້ອມທ້າຍເອກະສານລາຍງານການເງິນລວມ ແຕ່ໜ້າທີ 9 ຫາ 24 ແມ່ນຖືເປັນພາກສ່ວນໜຶ່ງ ຂອງເອກະສານລາຍງານການເງິນລວມສະບັບນີ້.

	หมายเหตุ	ทุนจดทะเบียน ล้านบาท	ส่วนเกินมูลค่าหุ้น ล้านบาท	ยังไม่จัดสรรตามระบบการ ล้านบาท	กำไรสะสม ล้านบาท	รวม ล้านบาท
ยอดยกมาต้นปี 1 มกราคม 2016		10,000	-	5,000	829,794	844,794
รับเงินปันผล		-	-	-	(292)	(292)
เพิ่มทุนจดทะเบียน		690,000	-	-	-	690,000
จ่ายเงินปันผล		-	-	-	(690,000)	(690,000)
สำรองตามกฎหมาย	14	-	-	5,899	(5,899)	-
กำไรสุทธิ		-	-	-	58,987	58,987
ยอดคงเหลือ ณ วันที่ 31 ธันวาคม 2016		**700,000**	**-**	**10,899**	**192,590**	**903,489**
ยอดยกมาต้นปี 1 มกราคม 2017		700,000	-	10,899	192,590	903,489
เงินรับสุทธิจากการออกหุ้นสามัญ	13	82,000	12,540	-	-	94,540
ลดทุนจดทะเบียน	13	(200,000)	-	-	-	(200,000)
สำรองตามกฎหมาย	14	-	-	672	(672)	-
กำไรสุทธิ		-	-	-	6,725	6,725
ยอดคงเหลือ ณ วันที่ 31 ธันวาคม 2017		**582,000**	**12,540**	**11,571**	**198,643**	**804,754**

นาย ชัยกร ปิ่นมณีรัตน์
ผู้อำนวยการใหญ่
วันที่

นาย อดิโนโม ชัยกรดา
ผู้อำนวยการเงิน
วันที่

ໃບລາຍງານ ກະແສເງິນສົດ
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2017

	ປີດ ອະທິບາຍ	2017 ລ້ານກີບ	2016 ລ້ານກີບ
ກະ ແສ ເງິນສົດ ຈາ ກກິດຈະກຳການດຳເນີນງານ			
ກຳໄລກ່ອນອາກອນກຳໄລສຳລັບປີ		7,814	61,376
ດັດແກ້ເພື່ອສົມທຽບກຳໄລສຸດທິ ກັບ ເງິນສົດສຸດທິ			
ບໍ່ໄດ້ຮັບຮູ້ (ຂາດທຶນ)/ກຳໄລ ໃນອັດຕາແລກປ່ຽນ		(1,001)	-
ຄ່າຫຼຸ້ຍຫ້ຽນ	7	3,354	4,047
ລາຍຈ່າຍດອກເບ້ຍ	16	9,890	(8,001)
ກຳໄລຈາກການດຳເນີນງານກ່ອນການປ່ຽນແປງທຶນໝຸນວຽນ		**20,057**	**57,422**
ການປ່ຽນແປງໃນເງິນທຶນໝຸນວຽນ			
- ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ		(142,729)	(59,707)
- ເຄື່ອງໃນສາງ		191	(90)
- ຊັບສິນໝຸນວຽນອື່ນໆ		3,222	(6,472)
- ຊັບສິນບໍ່ໝຸນວຽນອື່ນໆ		(89)	(192)
- ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		26,597	(14,716)
- ໜີ້ສິນໝຸນວຽນອື່ນໆ		5,107	28,967
ກະແສເງິນສົດທີ່ເກີດຈາກການດຳເນີນງານ		(87,643)	5,212
ອາກອນກຳໄລທີ່ຕ້ອງຈ່າຍ		(150)	(2,388)
ເງິນສົດສຸດທິ ຈາກກິດຈະກຳ ການດຳເນີນງານ		**(87,793)**	**2,824**
ກະແສເງິນສົດ ຈາກກິດຈະກຳ ການລົງທຶນ			
ຊື້ຊັບສິນຄົງທີ	7	(40)	(580)
ເງິນສົດສຸດທິ ຈາກກິດຈະກຳ ການດຳເນີນງານ		**(40)**	**(580)**
ກະແສເງິນສົດຈາກກິດຈະກຳການເງິນ			
ລາຍຮັບຈາກເງິນກູ້ຢືມ	10	135,631	9,700
ການຊຳລະເງິນຕົ້ນຂອງເງິນກູ້ຢືມ	10	(134,831)	(3,300)
ຮັບເງິນສົດຈາກການອອກຮຸ້ນສາມັນ	13	94,540	-
ຈ່າຍດອກເບ້ຍ		(7,762)	(7,999)
ຈ່າຍເງິນປັນຜົນ		-	(292)
ເງິນສົດຈາກກິດຈະກຳທາງການເງິນ		**87,578**	**(1,891)**
ເພີ່ມຂຶ້ນ/(ຫຼຸດລົງ) ສຸດທິໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		(255)	353
ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນຕົ້ນປີ	4	803	450
ຜົນຂອງອັດຕາແລກປ່ຽນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		(8)	-
ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນທ້າຍປີ	4	**540**	**803**
ລາຍການບໍ່ແມ່ນເງິນສົດ			
ອອກຮຸ້ນສາມັນ		-	690,000
ໜີ້ຕ້ອງຮັບການຄ້າ ຕໍ່ໄມ້		-	16,000
ຮຸ້ນສາມັນຫລຸດລົງທີ່ບໍ່ແມ່ນລາຍການເງິນສົດ	13	200,000	-
ຊຳລະບັນຊີໜີ້ຕ້ອງສົ່ງໂດຍການຫັກທະ	13	960	-

ທ່ານ ສິທາ ພົມມະຈິດ
ຜູ້ອຳນວຍການໃຫຍ່
ວັນທີ:

ທ່ານ ອະໄນໄລ ສີຫາລາດ
ຫົວໜ້າການເງິນ
ວັນທີ:

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນລວມ ແຕ່ໜ້າທີ 9 ຫາ 24 ແມ່ນຖືເປັນພາກສ່ວນໜຶ່ງ ຂອງເອກະສານລາຍງານການເງິນລວມສະບັບນີ້.

ເອກະສານຄັດຕິດ 3

ຊີວະປະຫວັດຫຍໍ້

ທ່ານ ສີທາ ພົມມະຈິດ
ບ້ານ ຫ້ວຍຫົ່ງ, ເມືອງຈັນທະບຸລີ, ນະຄອນຫຼວງ
ໂທລະສັບມືຖື: (856-20) 99996668
ວັນເດືອນປີເກີດ: ວັນທີ 25 ມີນາ 1984
ສັນຊາດ: ລາວ
ອີເມວ: sithaphc9999@yahoo.com



ວຸດທິການສຶກສາ

2013-2015 ປະລິນຍາໂທ ສາຂາບໍລິຫານທຸລະກິດ, ມະຫາວິທະຍາໄລຣັຕະນະ ບໍລິຫານທຸລະກິດ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ.

2003-2007 ປະລິນຍາຕີ ສາຂາວິທະຍາສາດທຳມະຊາດ, ມະຫາໄລແຫ່ງຊາດ, ບ້ານດົງໂດກ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ.

2004-2006 ຊັ້ນສູງ ສາຂາບໍລິຫານ ວິທະຍາໄລເສດຖາ, ບ້ານຈອມມະນີ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ.

ປະສົບການປະກອບວິຊາຊີບ

2016 ເຖິງ ປັດຈຸບັນ

ສະມາຊິກສະພາບໍລິຫານ/ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ.

2006 –2016

ຮອງຜູ້ອຳນວຍການ/ບໍລິສັດ ພູສີຫຼວງພະບາງກໍ່ສ້າງ ແລະ ສ້ອມແປງຂົວ-ທາງ ຈຳກັດຜູ້ດຽວ.

ຊີວະປະຫວັດຫຍໍ້



ທ່ານ. ພຸຂົງ ອ້ອນລະມະນີ
ບ້ານ ໂນນຄໍ້ໃຕ້, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ
ໂທລະສັບມືຖື: (856-20) 2222 4861
ວັນເດືອນປີເກີດ: ວັນທີ 12 ມີນາ 1976
ສັນຊາດ: ລາວ
ມີເມວ: phoukhonghai@gmail.com

ວຸດທິການສຶກສາ

2006-2007	ປະລິນຍາໂທ ທາງດ້ານການຄ້າລະຫວ່າງປະເທດ, ມະຫາວິທະຍາໄລປາຣີ, ຊອກ ບອນ ປາຣີ VI, ປະເທດຝະລັ່ງເສດ.
2005-2006	ປະລິນຍາໂທ ທາງດ້ານບໍລິຫານທຸລະກິດ, ສະຖາບັນການເມືອງ ແລະ ການ ປົກຄອງແຫ່ງຊາດ, ຫຼັກສູດສາກົນ, ນະຄອນຫຼວງວຽງຈັນ, ສປປ ລາວ.
1999-2000	ປະລິນຍາຕີ ທາງດ້ານບໍລິຫານທຸລະກິດ, ສະຖາບັນການເມືອງ ແລະ ການປົກຄອງ ແຫ່ງຊາດ, ຫຼັກສູດສາກົນ, ນະຄອນຫຼວງວຽງຈັນ, ສປປ ລາວ.
1999 (6 ເດືອນ)	ໂຮງຮຽນເອກະພາບ ເພື່ອການບໍລິການ ແລະ ການສຶກສາ, ນະຄອນຫຼວງວຽງຈັນ, ສປປ ລາວ.
1999 (5 ເດືອນ)	ໃບຢັ້ງຢືນບັນຊີວິສາຫະກິດລາວ ຢູ່ວິທິຍາໄລ ລັດຕະນະ ບໍລິຫານທຸລະກິດ, ນະຄອນຫຼວງວຽງຈັນ, ສປປ ລາວ.
1993-1998	ປະລິນຍາຕີ ທາງດ້ານອັກສອນສາດ, ລີງເລີກຄູສອນພາສາຝະລັ່ງເສດ, ຄະນະ ອັກສອນສາດ, ມະຫາວິທະຍາໄລແຫ່ງຊາດ, ສປປ ລາວ.
1990-1993	ມັດທະຍົມຕອນປາຍ ປາກເຊ, ແຂວງຈຳປາສັກ, ສປປ ລາວ.

ປະສົບການປະກອບວິຊາຊີບ

ມັງກອນ 2018 ເຖິງ ປັດຈຸບັນ

ບໍລິສັດ ພູສີ ກຣຸບ / ບໍລິສັດພູສີກໍ່ສ້າງ ແລະ ພັດທະນາ
ຜູ້ຊ່ວຍ ທ່ານປະທານ ບໍລິສັດພູສີ ກຣຸບ

ທັນວາ 2012 – ມິຖຸນາ 2017

ກະຊວງການເງິນ, ກົມພາສີ, ອົງການອຳນວຍຄວາມສະດວກ ທາງດ້ານ
ພາສີ ແລະ ການຄ້າ, ຜູ້ວິເຄາະໂຄງການ (ທີ່ປຶກສາ) ຂອງ ທະນາຄານໂລກ

ມິຖຸນາ 09 – ກໍລະກົດ 2010

ກຸ່ມບໍລິສັດ ພອນສັກ (ໂຄງການບໍ່ຄຳ ຄຳເກີດ ແສນອຸດົມ)
ຜູ້ຈັດການຝ່າຍບຸກຄະລາກອນ ປະຈຳພາກສະໜາມ

ມັງກອນ 09-ພຶດສະພາ 2009

ກຸ່ມບໍລິສັດ ພອນສັກ (ໂຄງການບໍ່ຄຳ ຄຳເກີດ ແສນອຸດົມ)
ຜູ້ປະສານງານໂຄງການ ແລະ ຫົວໜ້າຝ່າຍບໍລິຫານ

ພຶດສະພາ 08-ທັນວາ 08

ບໍລິສັດ ທີ່ປຶກສາດ້ານການພັດທະນາ ແລະ ວິສະຫະກິດ
ທີ່ປຶກສາ/ຄູຝຶກ

ມິຖຸນາ 08 – ພຶດສະພາ 09

ວິທະຍາໄລ ລາວ ອາເມລິກາ, ຄູສອນຮັບເຊີນ ວິຊາການຕະຫຼາດ Lao

ກໍລະກົດ 07 – ເມສາ 08

ບໍລິສັດແຊມ ແຫ່ງປະເທດລາວ, ພະນັກງານຝຶກເປັນຜູ້ຈັດການຂົນສົ່ງ ແລະ ຈັດ
ແຜນການຂົນສົ່ງ ຕາມໃບສັ່ງຊື້ຈາກລູກຄ້າ

ກຸມພາ 03 – ຕຸລາ 04

ສະຖາບັນ ສຸດສະກະ ເພື່ອການບໍລິຫານ ແລະ ເທັກໂນໂລຊີ
ຮອງອຳນວຍການ

ມັງກອນ 02 – ທັນວາ 02

ບໍລິສັດ Luamit & Hyokwant ຈຳກັດ; ຜູ້ຈັດການ

ສິງຫາ 00 – ພະຈິກ 01

ບໍລິສັດອິນໄຊດ໌ ເອເຊຍ (ບໍລິສັດທີ່ປຶກສາ ສຳຫຼວດທາງດ້ານການຕະຫຼາດ)
ຜູ້ຈັດການຫ້ອງການ

ຫຼັກສູດຝຶກອົບຮົມ

24-25 ເມສາ 2017	ເຂົ້າຮ່ວມການຝຶກອົບຮົມກ່ຽວກັບການກະກຽມວຽກງານຝຶກຕົວຈິງ ແລະການຄຸ້ມຄອງສັນຍາວຽກງານການກໍ່ສ້າງ ທີ່ຫ້ອງການທະນາຄານໂລກ
09-10 ມີຖຸນາ 2015	ເຂົ້າຮ່ວມການຝຶກອົບຮົມວຽກງານຈັດຊື້ຈັດຈ້າງ ສິນຄ້າ ແລະ ການກໍ່ສ້າງ ໂດຍນຳໃຊ້ນະໂຍບາຍຂອງທະນາຄານໂລກ ແລະ ຄູ່ມືການແນະນຳ, ທີ່ ໂຮງແຮມ ເສດຖາປະລາດ
17-18 ມີຖຸນາ 2014	ເຂົ້າຮ່ວມການຝຶກອົບຮົມວຽກງານຈັດຊື້ຈັດຈ້າງ ສິນຄ້າ ແລະ ການກໍ່ສ້າງ ໂດຍນຳໃຊ້ນະໂຍບາຍຂອງທະນາຄານໂລກ ແລະ ຄູ່ມືການແນະນຳ, ທີ່ ໂຮງແຮມ ເສດຖາປະລາດ
12 ພະຈິກ - 24 ທັນວາ 11	ເຂົ້າຮ່ວມຝຶກອົບຮົມ ກ່ຽວກັບ ໄມໂຄຣຊອບອອບພິດ ເຊັ່ນ: Word-Excel ໃນລະດັບຂັ້ນສູງ ຢູ່ວິທະຍາໄລ ລາວສິງກະໂປ
18-20 ພຶດສະພາ 2011	ເຂົ້າຮ່ວມການຝຶກອົບຮົມໄມໂຄຣຊອບ ໂປຣເຈັກ 2007, ການບໍລິຫານ ໂຄງການ ທີ່ປະເທດໄທ, ບາງກອກ
ພະຈິກ 08 (17-23)	ເຂົ້າຮ່ວມສຳມະນາຂອງບໍລິສັດ ຮອນດາ ກ່ຽວກັບຜູ້ປະກອບການໃນທະວີອາຊີ , ຈັດຕັ້ງໂດຍ ອົງການພະລິດຕພາບ ແຫ່ງ ເອເຊຍ, ຢູ່ເມືອງໂຕກຽວ, ກຽວໂຕ, ປະເທດຍີ່ປຸ່ນ
ສິງຫາ 08 (25-29)	ເຂົ້າຮ່ວມການຝຶກອົບຮົມ ກ່ຽວກັບການສ້າງກຸ່ມທຸລະກິດ ໃຫ້ແກ່ຄູ່ຝຶກ ທີ່ນະຄອນຫຼວງວຽງຈັນ, ສປປ ລາວ
ທັນວາ 07 (7 ວັນ)	ເຂົ້າຮ່ວມຝຶກອົບຮົມ ໃຫ້ແກ່ຫົວໜ້າຄວາມປອດໄພ ຢູ່ສະຖານທີ່ເຮັດວຽກ, ບໍລິສັດແຊ ແຫ່ງປະເທດໄທ
ເມສາ-ພຶດສະພາ 05	ຮຽນຫຼັກສູດຜູ້ປະກອບການ ທີ່ສູນສົ່ງເສີມພັດທະນາຜູ້ປະກອບການລາວ ອິນເດຍ ທີ່ ນະຄອນຫຼວງວຽງຈັນ, ສປປ ລາວ
2000 (7 ວັນ)	ໄປທັດສະນະສຶກສາຢູ່ສະຖາບັນເທັກໂນໂລຊີອາເຊຍ ແຫ່ງປະເທດໄທ

ທັກສະທາງດ້ານພາສາ

ພາສາລາວ: ພາສາແມ່ **ພາສາຝະລັ່ງເສດ:** ດີ

ພາສາອັງກິດ: ດີ **ພາສາຫວຽດນາມ:** ດີ

ຊີວະປະຫວັດຫຍໍ້

ທ່ານ ຂັນທະວົງ ດາລາວົງ
ບ້ານ ຕານມີໄຊ, ເມືອງໄຊທານີ, ນະຄອນຫຼວງ.
ໂທລະສັບມືຖື: (856-20) 55599153.
ວັນເດືອນປີເກີດ: ວັນທີ 10 ມີຖຸນາ 1961.
ສັນຊາດ: ລາວ.
ອີເມວ: khanthavong1958@gmail.com



ວຸດທິການສຶກສາ

- ປະລິນຍາໂທ ຄະນິດສາດ, ມະຫາວິທະຍາໄລໂອນໂກກຮາດ, ປະເທດຣັດເຊຍ.
- ປະລິນຍາໂທ ບໍລິຫານທຸລະກິດ ມະຫາວິທະຍາໄລຂອນແກ່ນ.
- ປະລິນຍາຕີ ການກໍ່ສ້າງ ແລະ ການສ້າງພັກ, ມະຫາວິທະຍາໄລ ໂອນໂກກຮາດ,ປະເທດຣັດເຊຍ.
- ປະລິນຍາຕີ ຄະນິດສາດ, ມະຫາວິທະຍາໄລ ໂອນໂກກຮາດ, ປະເທດຣັດເຊຍ.
- ປະລິນຍາຕີ ດົນຕີ, ມະຫາວິທະຍາໄລ ດົນຕີ ໂມສໂກ, ປະເທດຣັດເຊຍ.
- ປະລິນຍາຕີ ຄຸ້ມຄອງອຸດສາຫະກຳ, ປະເທດຣັດເຊຍ.
- ປະລິນຍາຕີ ການຄອມພິວເຕີ (ມີເດຍ) ສ້າງພາບພະຍົນ, ມະຫາວິທະຍາໄລ RECSAM.
- ຊັ້ນສູງ ຄະນິດສາດໂຮງຮຽນ ສ້າງຄູ ເລກ 3.

ປະສົບການປະກອບວິຊາຊີບ

2016 ເຖິງ ປັດຈຸບັນ

ຮອງປະທານສະພາບໍລິຫານ / ສະມາຊິກອິດສະຫຼະ, ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ.

2015 ເຖິງ ປັດຈຸບັນ

ທີ່ປຶກສາ (ມາດຕະຖານ ແລະ ການຄຸ້ມຄອງລະບົບ ISO)/ສູນຢັ້ງຢືນມາດຕະຖານ ແລະ ກວດກາຄຸນະພາບແຫ່ງຊາດ.

2006-2016

ເລຂາທິການ (ບໍລິຫານສະພາ)/ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ.

2004-2006

ຊ່ຽວຊານງານຫຼັກສູດ ແລະ ຕຳລາຮຽນ (ບໍລິຫານໂຄງການ)/ໂຄງການ TTES ກະຊວງ ສຶກສາທິການ.

2000-2004

ຜູ້ອຳນວຍການ (ຜູ້ບໍລິຫານໂຮງງານທັງສອງແຫ່ງ)/ໂຮງງານເຫຼັກຊຽງຄວນ ແລະ ໂຮງງານສັງກະສີ ໂພນທັນ.

1999-2000

ຫົວໜ້າພະແນກບໍລິຫານທຸລະກິດ (ອາຈານສອນ ວິຊາ ທຸລະກິດ)/ມະຫາວິທະຍາໄລແຫ່ງຊາດ.

1990-1999

ຫົວໜ້າໜ່ວຍງານວິທະຍາສາດທຳມະຊາດ (ຊ່ຽວຊານດ້ານຫຼັກສູດ)/ສູນພັດທະນາຄູ.

1990-1993

ຫົວໜ້າພະແນກຄະນິດສາດ (ອາຈານສອນ ຄະນິດສາດ)/ໂຮງຮຽນສ້າງຄູ ດົງໂດກ.

1981-1983

ຫົວໜ້າພະແນກທຳມະຊາດ (ອາຈານສອນ ຄະນິດສາດ)/ໂຮງຮຽນສ້າງຄູເລກ 3.

1976-1978

ຫົວໜ້າຊີ້ນຳປະຊາສຶກສາເຂດຊົນເຜົ່າມົ້ງ (ອາຈານສອນ ຄະນິດສາດ)/ສຶກສາສູນກາງວຽງໄຊ.

ຫຼັກສູດຝຶກອົບຮົມ

- ວິທີການສ້າງຫຼັກສູດ ແລະ ຕຳລາຮຽນ, ມະຫາວິທະຍາໄລ ສີນະຄອນ ວິໂຣດ.
- ວິທີການບໍລິຫານອຸດສາຫະກຳ ແລະ ຄວາມສ່ຽງ, ສະຖາບັນການສຶກສາ ໂກອົມໂບ.
- ການຄຸ້ມຄອງຄຸນນະພາບ ແລະ ການກວດສອບ, ສະຖາບັນການສົ່ງເສີມອຸດສາຫະກຳ.
- ການຄຸ້ມຄອງລິຂະສິດທາງປັນຍາ, ສະຖາບັນຈັນຍາບັນເຈນີວາ.

ຊີວະປະຫວັດຫຍໍ້

ທ່ານ ນັນທະລັດ ທິລະກຸນ.
ບ້ານ ວຽງຄຳ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ.
ໂທລະສັບມືຖື: (856-20) 56110372.
ວັນເດືອນປີເກີດ: ວັນທີ 05 ມັງກອນ 1970.
ສັນຊາດ: ລາວ.
ອີເມວ: thirakul@hotmail.com



ວຸດທິການສຶກສາ

- ຊັ້ນສູງການບໍລິຫານ ວິທະຍາໄລ Fanshawe ກຸງລອນດອນ.

ປະສົບການປະກອບວິຊາຊີບ

2016 ເຖິງ ປັດຈຸບັນ

ສະມາຊິກອິດສະຫຼະ/ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ.

2011 -2016

ຜູ້ອຳນວຍການ/ Consultant – Accounting Company.

2009 – 2011

ຜູ້ອຳນວຍການ/ Petroff Communication.

2001 - 2003

ຜູ້ຈັດການ/ Canada Life Insurance.

<u>ເອກະສານຄັດຕິດ 6</u>

ໃບມອບສິດ

ຂຽນທີ.....

ວັນທີ.....ເດືອນ.....ປີ.....

(1) ຂ້າພະເຈົ້າ.....ສັນຊາດ.....ວັນທີ ເດືອນ ແລະ ປີເກີດ.....
ບັດປະຈຳຕົວເລກທີ..... ຫຼືໜັງສືຜ່ານແດນ ເລກທີ.....
ຢູ່ເຮືອນ ເລກທີ..... ບ້ານ.....ຖະໜົນ.....
ເມືອງ..... ແຂວງ.....ປະເທດ.....

(2) ເປັນຜູ້ຖືຮຸ້ນຂອງ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ໂດຍຖືຮຸ້ນສາມັນຈຳນວນລວມທັງໝົດ .....ຮຸ້ນ ເຊິ່ງເທົ່າກັບຈຳນວນທີ່ຈະລົງຄະແນນສຽງໄດ້.

(3) ຂໍມອບໝາຍໃຫ້ (ກະລຸນາໃສ່ເຄື່ອງໝາຍ ✓ ລົງໃນຊ່ອງຜູ້ຮັບມອບສິດພຽງທ່ານໃດທ່ານໜຶ່ງ)

☐ (3.1) ທ່ານ/ທ່ານ ນາງ.....ອາຍຸ.....ປີ , ບັດປະຈຳຕົວເລກທີ..... ຫຼື ໜັງສືຜ່ານແດນເລກທີ....., ຢູ່ ເຮືອນ ເລກທີ..... ຖະໜົນ.....ບ້ານ.....ເມືອງ..... ແຂວງ.....ລະຫັດໄປສະນີ....., ປະເທດ..... ຫຼື.....

☐ (3.2) ທ່ານ ຂັນທະວົງ ດາລາວົງ ..... ອາຍຸ.....57.....ປີ, ບັດປະຈຳຕົວເລກທີ..... ຫຼື ໜັງສືຜ່ານແດນ ເລກທີ....., ຢູ່ ເຮືອນ ເລກທີ.....ຖະໜົນ..... ບ້ານ..... ຕາມມີໄຊ.....ເມືອງ.....ໄຊທານີ..... ແຂວງ.....ນະຄອນຫຼວງວຽງຈັນ.....ລະຫັດໄປສະນີ....., ປະເທດ..... ຫຼື.....

☐ (3.3) ທ່ານ ນັນທະລັດ ທິລະກຸນ ..... ອາຍຸ.....48.....ປີ, ບັດປະຈຳຕົວເລກທີ..... ຫຼື ໜັງສືຜ່ານແດນ ເລກທີ....., ຢູ່ ເຮືອນ ເລກທີ.....ຖະໜົນ..... ບ້ານ.....ວຽງຄຳ.....ເມືອງ.....ສີໂຄດຕະບອງ..... ແຂວງ.....ນະຄອນຫຼວງວຽງຈັນ..... ລະຫັດໄປສະນີ.....,ປະເທດ..... ຫຼື.....

ເປັນຜູ້ຕາງໜ້າຂອງຂ້າພະເຈົ້າ ເພື່ອເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງແທນຂ້າພະເຈົ້າໃນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2017 ເວລາ 13:00 ໂມງ ຢູ່ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 8, ອາຄານຕະຫຼາດຫຼັກຊັບລາວ, ຖະໜົນ T4, ບ້ານ ໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ ຫຼື ມື້ທີ່ໄດ້ເລື່ອນໄປໃນວັນ, ເວລາ ແລະ ສະຖານທີ່ອື່ນດ້ວຍ.

(4) ຂ້າພະເຈົ້າຂໍມອບໝາຍໃຫ້ຜູ້ຕາງໜ້າລົງຄະແນນສຽງແທນຂ້າພະເຈົ້າໃນກອງປະຊຸມ ດັ່ງນີ້:

☐ ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງມະຕິແທນຂ້າພະເຈົ້າໄດ້ທຸກປະການຕາມທີ່ເຫັນສົມຄວນ; ຫຼື

☐ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າ ແລະ ມີສິດຈະພິຈາລະນາ ແລະ ລົງມະຕິແທນຂ້າພະເຈົ້າໃນບາງວາລະ (ກະລຸນາຕື່ມຂໍ້ມູນດ້ານລຸ່ມນີ້); ຫຼື

☐ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າ (ກະລຸນາຕື່ມຂໍ້ມູນດ້ານລຸ່ມນີ້)

ວາລະທີ 01: ພິຈາລະນາ ແລະ ຮັບຮອງເອົາລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2017 ແລະ ເອກະສານລາຍງານການເງິນຂອງບໍລິສັດ ປະຈຳປີ 2017

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 02: ພິຈາລະນາ ແລະ ຮັບຮອງ ແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2018.

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 03: ພິຈາລະນາ ແລະ ອະນຸມັດການແບ່ງກຳໄລສຸດທິເພື່ອການຈ່າຍເງິນປັນຜົນ ແລະ ແບ່ງເຂົ້າຄັງສຳຮອງຕ່າງໆ ປະຈຳປີ 2017.

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 04: ພິຈາລະນາ ແລະ ອະນຸມັດ ການມອບອຳນາດໃຫ້ແກ່ສະພາບໍລິຫານ ພິຈາລະນາ ແລະ ອະນຸມັດຈ່າຍເງິນປັນຜົນລະຫວ່າງປີ ຂອງປີຕໍ່ໆໄປ.

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 05: ພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງ ແລະ ກຳນົດຄ່າຈ້າງ ຜູ້ກວດສອບບັນຊີພາຍນອກ ປີ 2018.

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 06: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຜູ້ອຳນວຍການແທນຜູ້ອຳນວຍການທີ່ລາອອກ.

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 07: ພິຈາລະນາ ແລະ ອະນຸມັດແຕ່ງຕັ້ງສະມາຊິກສະພາບໍລິຫານແທນສະມາຊິກສະພາບໍລິຫານທີ່ລາອອກ.

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 08: ພິຈາລະນາ ແລະ ອະນຸມັດແຕ່ງຕັ້ງຄະນະກຳມະການກວດສອບ ແລະ ຄະນະກຳມະການກຳນົດຄ່າຕອບແທນ

☐ ເຫັນດີ ☐ ບໍ່ເຫັນດີ

(5) ການລົງຄະແນນສຽງຂອງຜູ້ຕາງໜ້າ ໃນວາລະການປະຊຸມໃດທີ່ບໍ່ເປັນໄປຕາມທີ່ລະບຸໄວ້ໃນໜັງສືມອບສິດສະບັບນີ້ໃຫ້ຖືວ່າການລົງຄະແນນສຽງນັ້ນ ບໍ່ຖືກຕ້ອງ ແລະ ບໍ່ແມ່ນການລົງຄະແນນສຽງຂອງຂ້າພະເຈົ້າໃນຖານະຜູ້ຖືຮຸ້ນ;

(6) ໃນກໍລະນີທີ່ຂ້າພະເຈົ້າບໍ່ໄດ້ລະບຸຈຸດປະສົງໃນການອອກສຽງລົງຄະແນນໃນວາລະໃດໄວ້ ຫຼື ລະບຸໄວ້ບໍ່ຊັດເຈນ ຫຼື ໃນກໍລະນີທີ່ກອງປະຊຸມມີການພິຈາລະນາ ຫຼື ລົງມະຕິເລື່ອງໃດນອກເໜືອທີ່ລະບຸໄວ້ຂ້າງຕົ້ນ ລວມເຖິງກໍລະນີທີ່ມີການແກ້ໄຂປ່ຽນແປງ ຫຼື ເພື່ອເຕີມຂໍ້ເທັດຈິງໃດໜຶ່ງ ໃຫ້ຜູ້ຮັບມອບສິດມີສິດພິຈາລະນາ ແລະ ລົງມະຕິແທນຂ້າພະເຈົ້າໄດ້ທຸກປະການຕາມທີ່ເຫັນສົມຄວນ; ແລະ

(7) ກິດຈະກຳໃດທີ່ຜູ້ຮັບມອບສິດໄດ້ເຮັດໄປໃນການປະຊຸມນັ້ນ ໃຫ້ຄືກັນກັບວ່າຂ້າພະເຈົ້າໄດ້ເຮັດເອງທຸກປະການ.

ລົງລາຍເຊັນ.....ຜູ້ມອບສິດ ລົງລາຍເຊັນ.....ຜູ້ຮັບມອບສິດ

(.....) (.....)

ລົງລາຍເຊັນ.....ພະຍານ ລົງລາຍເຊັນ.....ພະຍານ

(.....) (.....)

ໝາຍເຫດ

1. ຜູ້ຖືຮຸ້ນທີ່ມອບໝາຍຈະຕ້ອງມອບໝາຍໃຫ້ຜູ້ຕາງໜ້າພຽງທ່ານດຽວເປັນຜູ້ເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງ ລວມທັງບໍ່ສາມາດແບ່ງແຍກຈຳນວນຮຸ້ນໃຫ້ຜູ້ຕາງໜ້າຫຼາຍທ່ານເພື່ອແຍກການລົງຄະແນນສຽງໄດ້; ແລະ
2. ກົດໝາຍວ່າດ້ວຍທະບຽນສານ(ສະບັບປັບປຸງ) ເລກທີ 11/ສພຊ, ລົງວັນທີ 26 ພະຈິກ 2009 ກຳນົດວ່າ ເພື່ອເປັນການຮັບປະກັນຄວາມຜູກພັນຂອງຜູ້ມອບໝາຍ ແລະ ຜູ້ຕາງໜ້າທາງດ້ານກົດໝາຍ, ດັ່ງນັ້ນ ໃບມອບສິດສະບັບນີ້ຈະຕ້ອງໄດ້ນຳໄປຈົດທະບຽນສານນຳສຳນັກງານທະບຽນສານ, ກະຊວງຍຸຕິທຳ ໃນນີ້ ບໍລິສັດຈະບໍ່ຮັບຜິດຊອບໃດໆ ໃນກໍລະນີທີ່ໃບມອບສິດ ສະບັບນີ້ທີ່ຍື່ນຕໍ່ບໍລິສັດບໍ່ໄດ້ຈົດທະບຽນສານ.
3. ຜູ້ຕາງໜ້າຕ້ອງສະແດງເອກະສານຂອງຕົນເອງຕໍ່ພະນັກງານປະຈຳໂຕະລົງທະບຽນ ຄື: ບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ລົງທຶນຕ່າງປະເທດ) ພ້ອມກັບສຳເນົາເອກະສານປະເພດດຽວກັນນີ້ ຂອງຜູ້ຖືຮຸ້ນ,ໃບມອບສິດສະບັບນີ້ ແລະ ໜັງສືເຊີນປະຊຸມ.

ເອກະສານ ແລະ ຫຼັກຖານທີ່ຕ້ອງໃຊ້ໃນການສະເໜີໂຕເຂົ້າຮ່ວມກອງປະຊຸມ, ການມອບໝາຍ, ການລົງທະບຽນ ແລະ ການລົງຄະແນນສຽງ

ເພື່ອຄວາມສະດວກໃນການລົງທະບຽນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2017 ຂອງບໍລິສັດ ພູ ສີກໍ່ສ້າງ ແລະ ພັດທະນາມະຫາຊົນ, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ຈະມາເຂົ້າຮ່ວມກອງປະຊຸມ ກະລຸນານຳໜັງສືເຊີນປະຊຸມ ແລະ ກະກຽມເອກະສານ ຕາມທີ່ກຳນົດດ້ານລຸ່ມນີ້ມາພ້ອມ.

<u>ບໍລິສັດຂໍສະຫງວນສິດໃນການອະນຸຍາດໃຫ້ສະເພາະຜູ້ທີ່ມີເອກະສານຖືກຕ້ອງ ແລະ ຄົບຖ້ວນເທົ່ານັ້ນ ຈຶ່ງສາມາດເຂົ້າຮ່ວມກອງປະຊຸມໄດ້</u>

1. ເອກະສານ ແລະ ຫຼັກຖານທີ່ຕ້ອງໃຊ້ໃນການສະເໜີເຂົ້າຮ່ວມກອງປະຊຸມ

1.1 ກໍລະນີຜູ້ຖືຮຸ້ນເປັນບຸກຄົນ

1.1.1. ກໍລະນີຜູ້ຖືຮຸ້ນເຂົ້າຮ່ວມປະຊຸມດ້ວຍຕົນເອງ

ໃຫ້ສະແດງເອກະສານທີ່ລັດຖະການອອກໃຫ້ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນທີ່ເປັນຄົນຕ່າງປະເທດ) ແລະ ຫາກການປ່ຽນຊື່-ນາມສະກຸນໃຫ້ຍື່ນຫຼັກຖານປະກອບພ້ອມ

1.1.2. ກໍລະນີຜູ້ຖືຮຸ້ນມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນໃຫ້ແຈ້ງເອກະສານດັ່ງລຸ່ມນີ້:

(1) ໃບມອບສິດຕາມແບບຟອມທີ່ຄັດຕິດພ້ອມໜັງສືເຊີນປະຊຸມ ເຊິ່ງໄດ້ມີການປະກອບຂໍ້ມູນຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນພ້ອມຂຽນຊື່ແຈ້ງຂອງຜູ້ຖືຮຸ້ນທີ່ມອບໝາຍ ແລະ ຜູ້ຕາງໜ້າ;

(2) ສຳເນົາເອກະສານທີ່ທາງລັດຖະການອອກໃຫ້ຂອງຜູ້ຖືຮຸ້ນທີ່ມອບໝາຍຕາມຂໍ້ 1.1.1 ເຊິ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຜູ້ຖືຮຸ້ນທີ່ມອບໝາຍ;

(3) ເອກະສານທີ່ທາງລັດຖະການອອກໃຫ້ຜູ້ຕາງໜ້າ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຕາງທີ່ເປັນຄົນຕ່າງປະເທດ) ແລະ ຫາກການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

1.2 ຜູ້ຖືຮຸ້ນເປັນນິຕິບຸກຄົນ

1.2.1 ກໍລະນີຕົວແທນຂອງຜູ້ຖືຮຸ້ນ (ຄະນະອຳນວຍການ) ເຂົ້າຮ່ວມກອງປະຊຸມດ້ວຍຕົນເອງໃຫ້ແຈ້ງເອກະ ສານດັ່ງລຸ່ມນີ້:

(1) ເອກະສານທີ່ທາງລັດຖະການອອກໃຫ້ຂອງຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຕົວແທນນິຕິບຸກຄົນ (ຄະນະອຳນວຍການ) ທີ່ເປັນຄົນຕ່າງປະເທດ) ແລະ ຫາກການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

(2) ສຳເນົາໃບອານຸຍາດລົງທຶນຕ່າງປະເທດ (ຖ້າມີ), ໃບທະບຽນວິສາຫະກິດ, ກົດລະບຽບຂອງບໍລິສັດ ແລະ ໃບທະບຽນອາກອນ (ປີລ່າສຸດ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນ ເຊິ່ງມີຂໍ້ມູນສະແດງໃຫ້ເຫັນວ່າຕົວແທນຂອງນິຕິບຸກຄົນທີ່ເຂົ້າຮ່ວມກອງປະຊຸມມີອຳນາດດຳເນີນການແທນນິຕິບຸກຄົນ

ທີ່ເປັນຜູ້ຖືຮຸ້ນ ເຊິ່ງໄດ້ລົງລາຍເຊັ່ນຮັບຮອງສຳເນົາຖືກຕ້ອງໂດຍຕົວແທນຂອງນິຕິບຸກຄົນ (ຄະນະອຳນວຍການ)

1.2.2 ກໍລະນີຜູ້ຖືຮຸ້ນມອບໝາຍໃຫ້ຜູ້ຕາງໜ້າ ເຂົ້າຮ່ວມກອງປະຊຸມແທນໃຫ້ແຈ້ງເອກະສານດັ່ງລຸ່ມນີ້:

- ໃບມອບສິດ ຕາມແບບຟອມທີ່ຄັດຕິດມາພ້ອມໜັງສືເຊີນປະຊຸມ ເຊິ່ງໄດ້ມີການປະກອບຂໍ້ມູນຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນພ້ອມຂຽນຊື່ແຈ້ງໂດຍຜູ້ຖືຮຸ້ນທີ່ມອບໝາຍ ແລະ ຜູ້ຕາງໜ້າ;
- ສຳເນົາໃບອະນຸຍາດລົງທຶນຕ່າງປະເທດ (ຖ້າມີ) ໃບທະບຽນວິສາຫະກິດ, ກິດລະບຽນຂອງບໍລິສັດ ແລະ ໃບທະບຽນອາກອນ (ປີລ່າສຸດ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນດັ່ງກ່າວທີ່ມີຂໍ້ຄວາມສະແດງໃຫ້ເຫັນວ່າຕົວແທນຂອງນິຕິບຸກຄົນມີອຳນາດກະທຳການແທນນິຕິບຸກຄົນທີ່ເປັນຜູ້ຖືຮຸ້ນ ເຊິ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງ ໂດຍຕົວແທນຂອງນິຕິບຸກຄົນ (ຄະນະອຳນວຍການ);
- ສຳເນົາເອກະສານທີ່ທາງລັດຖະການອອກໃຫ້ຂອງຕົວແທນຂອງນິຕິບຸກຄົນ (ຄະນະອຳນວຍການ) ຕາມຂໍ້ 1.2.1(1) ເຊິ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຕົວແທນຂອງນິຕິບຸກຄົນ (ຄະນະອຳນວຍການ);
- ເອກະສານທີ່ທາງລັດຖະການອອກໃຫ້ຂອງຜູ້ຕາງໜ້າ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຕາງໜ້າທີ່ເປັນຄົນຕ່າງປະເທດ) ແລະ ຫາກການປ່ຽນຊື່-ນາມສະກຸນໃຫ້ຍື່ນຫຼັກຖານປະກອບພ້ອມ.

1.2.3 ກໍລະນີຜູ້ຖືຮຸ້ນເປັນນິຕິບຸກຄົນຕ່າງປະເທດ

(1) ໃຫ້ປະຕິບັດຕາມຂໍ້ 1.2.1 ຫຼື ຂໍ້ 1.2.2 ແລ້ວແຕ່ກໍລະນີ

(2) ເອກະສານຂອງນິຕິບຸກຄົນຕ່າງປະເທດຕ້ອງໄດ້ແປເປັນພາສາລາວ ຫຼື ພາສາອັງກິດ ແລະໃຫ້ຕົວແທນຂອງນິຕິບຸກຄົນດັ່ງກ່າວລົງລາຍເຊັນຮັບຮອງສະບັບແປພາສາດັ່ງກ່າວ

2. ການມອບໝາຍ

ຜູ້ຖືຮຸ້ນທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນບໍລິສັດໄດ້ດ້ວຍຕົນເອງສາມາດມອບໝາຍໃຫ້ຜູ້ຕ່າງໜ້າເຂົ້າຮ່ວມກອງປະຊຸມແທນໄດ້ໂດຍດຳເນີນການດັ່ງນີ້:

2.1. ມອບໝາຍໃຫ້ຜູ້ໃດຜູ້ໜຶ່ງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຫຼື ເລືອກມອບສິດໃຫ້ສະມາຊິກອິດສະຫຼະຂອງສະພາບໍລິຫານຂອງບໍລິສັດທ່ານໃດທ່ານໜຶ່ງໂດຍໃຫ້ລະບຸຊື່ພ້ອມກາເຄື່ອງໝາຍ ✓ ລົງໃນຊ່ອງ □ ໜ້າຊື່ຜູ້ຮັບມອບສິດຕາມທີ່ລະບຸໄວ້ໃນໃບມອບສິດໂດຍເລືອກພຽງຜູ້ດຽວໃຫ້ເປັນຜູ້ຮັບມອບສິດໃນການເຂົ້າຮ່ວມກອງປະຊຸມດັ່ງກ່າວ;

2.2. ນຳສົ່ງໜັງສືມອບສິດຄືນເລຂາກອງປະຊຸມບໍລິສັດ ກ່ອນວັນທີ 25 ເມສາ 2018 ຫຼື ກ່ອນເວລາເປີດກອງປະຊຸມຢ່າງໜ້ອຍ 1 ຊົ່ວໂມງ ເພື່ອໃຫ້ເຈົ້າໜ້າທີ່ຂອງບໍລິສັດໄດ້ມີເວລາກວດກາເອກະສານໃຫ້ທັນເວລາເປີດກອງປະຊຸມ.

ໃນນີ້, ຜູ້ຖືຮຸ້ນບໍ່ສາມາດແບ່ງແຍກຈຳນວນຮຸ້ນໂດຍມອບໝາຍໃຫ້ຜູ້ຕ່າງໜ້າຫຼາຍຄົນເພື່ອແບ່ງການລົງຄະແນນສຽງໄດ້ ແລະ ຜູ້ຖືຮຸ້ນຈະຕ້ອງມອບໝາຍເທົ່າກັບຈຳນວນຮຸ້ນທີ່ຕົນຖືຢູ່ເທົ່ານັ້ນໂດຍບໍ່ສາມາດມອບໝາຍພຽງບາງສ່ວນນ້ອຍກວ່າຈຳນວນທີ່ຕົນຖືຢູ່ໄດ້.

3. ການລົງທະບຽນ

ບໍລິສັດຈະເລີ່ມເປີດຮັບລົງທະບຽນຜູ້ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017 ຂອງບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ກ່ອນເປີດກອງປະຊຸມ 2 ຊົ່ວໂມງ ຫຼື ຕັ້ງແຕ່ເວລາ 13:00 ໂມງ ເປັນຕົ້ນໄປໃນວັນທີ 25 ເມສາ 2018 ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 8, ອາຄານຕະຫຼາດຫຼັກຊັບລາວ, ຖະໜົນ T4, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ ຕາມແຜນທີ່ທີ່ໄດ້ຄັດຕິດມາພ້ອມ

ໃນນີ້, ໃນແຕ່ລະວາລະກອງປະຊຸມກ່ອນເລີ້ມການລົງຄະແນນ, ບໍລິສັດຈະປິດຮັບລົງທະບຽນເປັນການຊົ່ວຄາວ ແລະ ຈະເປີດຮັບລົງທະບຽນອີກເມື່ອການນັບຄະແນນຂອງແຕ່ລະວາລະປະຊຸມສຳເລັດແລ້ວ

4. ການລົງຄະແນນສຽງ ແລະ ການນັບຜົນການລົງຄະແນນສຽງ

4.1. ການລົງຄະແນນສຽງ

(1) ໜຶ່ງຮຸ້ນເທົ່າກັບໜຶ່ງສຽງ ແລະ ຜູ້ຖືຮຸ້ນຈະຕ້ອງລົງຄະແນນສຽງເທົ່າກັບຈຳນວນຮຸ້ນຕົນຖືຢູ່ ເທົ່ານັ້ນ

(2) ບໍລິສັດຈະຈັດໃຫ້ມີບັດລົງຄະແນນ (Ballots) ສຳລັບທຸກໆ ວາລະປະຊຸມທີ່ຕ້ອງມີການລົງຄະແນນສຽງໂດຍບໍລິສັດຈະແຈກບັດລົງຄະແນນໃຫ້ຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າທຸກຄົນໃນເວລາທີ່ລົງທະບຽນ, **ຍົກເວັ້ນ** ສຳລັບຜູ້ຕາງໜ້າ ເຊິ່ງຜູ້ຖືຮຸ້ນທີ່ມອບໝາຍໄດ້ລະບຸການລົງຄະແນນສຽງມາໃນໃບມອບສິດຢ່າງຈະແຈ້ງແລ້ວ ບໍລິສັດຈະບໍ່ແຈກບັດລົງຄະແນນໃຫ້ແກ່ຜູ້ຕາງໜ້າດັ່ງກ່າວ, ໃນນີ້ ຜູ້ທີ່ມາລົງທະບຽນຫຼັງຈາກເວລາທີ່ກອງປະຊຸມຜູ້ຖືຮຸ້ນໄດ້ເປີດກອງປະຊຸມໄປຕາມລະບຽບວາລະປະຊຸມບາງສ່ວນແລ້ວ, ຈະໄດ້ຮັບບັດລົງຄະແນນສະເພາະວາລະປະຊຸມທີ່ເຫຼືອຢູ່ເທົ່ານັ້ນ.

4.2. ວິທີປະຕິບັດໃນການລົງຄະແນນສຽງໃນແຕ່ລະວາລະປະຊຸມ

ໃນການລົງຄະແນນສຽງໃນແຕ່ລະວາລະກອງປະຊຸມ ເພື່ອບໍ່ໃຫ້ເປັນການເສຍເວລາຂອງຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າທັງໝົດ, ປະທານຈະຖາມກອງປະຊຸມວ່າມີຜູ້ໃດບໍ່ເຫັນດີ ຫຼື ບໍ່ ຜູ້ທີ່ເຫັນດີບໍ່ຕ້ອງການເຄື່ອງໝາຍໃດໆ ລົງໃນບັດລົງຄະແນນ (Ballots) ສ່ວນຜູ້ທີ່ບໍ່ເຫັນດີ ກັບວາລະປະຊຸມດັ່ງກ່າວໃຫ້ການເຄື່ອງໝາຍເຄື່ອງໝາຍ ✓ ລົງໃນຊ່ອງ □ ບໍ່ເຫັນດີ ໃນບັດລົງຄະແນນ ພ້ອມທັງລົງລາຍເຊັນໃນບັດລົງຄະແນນ ແລະ ຍົກມືຂຶ້ນເພື່ອສົ່ງມອບໃຫ້ເຈົ້າໜ້າທີ່ຂອງບໍລິສັດນຳໄປກວດນັບ, ຍົກເວັ້ນສຳລັບຜູ້ຕາງໜ້າເຊິ່ງຜູ້ຖືຮຸ້ນທີ່ມອບໝາຍໄດ້ລະບຸການລົງຄະແນນສຽງມາໃນໃບມອບມອບສິດຢ່າງຈະແຈ້ງແລ້ວ ບໍລິສັດຈະບັນທຶກຄະແນນສຽງດັ່ງກ່າວຕັ້ງແຕ່ເວລາຜູ້ທີ່ຕາງໜ້າລົງທະບຽນເຂົ້າຮ່ວມປະຊຸມ.

ໃນນີ້, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ສົ່ງບັດລົງຄະແນນບໍ່ເຫັນດີ ພາຍຫຼັງທີ່ປະທານໄດ້ປະກາດໃຫ້ກອງປະ ຊຸມຮັບຊາບຜົນການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງແລ້ວນັ້ນ, ບໍລິສັດຈະບໍ່ນຳເອົາຄະແນນສຽງດັ່ງກ່າວມາລວມເປັນຄະແນນສຽງອີກ.

4.3. ການນັບຄະແນນສຽງ ແລະ ການແຈ້ງຜົນການນັບຄະແນນ

ຜູ້ອຳນວຍການໃຫຍ່ຂອງບໍລິສັດຈະເປັນຜູ້ອະທິບາຍວິທີນັບຄະແນນສຽງໃຫ້ກອງປະຊຸມຮັບຊາບ ກ່ອນເລີ່ມວາລະປະຊຸມໂດຍບໍລິສັດຈະນັບຄະແນນສຽງ ແລະ ແຈ້ງຜົນການນັບຄະແນນສຽງໃຫ້ກອງປະຊຸມຮັບຊາບ ກ່ອນສິ້ນສຸດການປະຊຸມໃນແຕ່ລະວາລະ

ໃນນີ້, ບໍລິສັດຈະໃຊ້ວິທີຫັກຄະແນນສຽງທີ່ບໍ່ເຫັນດີອອກຈາກຈຳນວນສຽງທັງໝົດ ແລະ ສ່ວນທີ່ເຫຼືອ ຈະຖືເປັນຄະແນນສຽງທີ່ເຫັນດີ

ແຜນທີ່ສະຖານທີ່ຈັດປະຊຸມ



ສະຖານທີ່: ຫ້ອງປະຊຸມໃຫຍ່ ຊັ້ນ 8, ອາຄານຕະຫຼາດຫຼັກຊັບລາວ **(LSX)**,
ຖະໜົນ T4, ບ້ານ ໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ,
ສປປ ລາວ. ໂທລະສັບ: +856 (21) 265 394, ແຟັກ: +856 (21) 265394